## ບົດສະເໜີ
## ສະພາບການປັບປຸງ ແລະ ຈັດຕັ້ງປະຕິບັດດຳລັດ ວ່າດ້ວຍ ສະມາຄົມ ແລະ ດຳລັດ ວ່າດ້ວຍ ມູນນິທິ

### I. ສະພາບການປັບປຸງໃນໄລຍະຜ່ານມາ

ການອະນຸມັດສ້າງຕັ້ງ ແລະ ຄຸ້ມຄອງອົງການຈັດຕັ້ງສັງຄົມໃນເມື່ອກ່ອນ ແມ່ນຍັງມີລັກສະນະຊະຊາຍ, ຂາດຄວາມເປັນເອກະພາບ ແລະ ບໍ່ສາມາດເກັບກຳສັງລວມຂໍ້ມູນ, ສະຖິຕິຕົວເລກໃນດ້ານຕ່າງໆ. ສິ່ງດັ່ງກ່າວນີ້ ພາໃຫ້ມີທິດຂອງຂັ້ນເທິງໃຫ້ຄົ້ນຄວ້າອອກນິຕິກຳເພື່ອດັດປັບວຽກງານດັ່ງກ່າວໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ລວມສູນ ເພື່ອຄຸ້ມຄອງອົງການຈັດຕັ້ງສັງຄົມໃນຂອບເຂດທົ່ວປະເທດ. ຫຼັງຈາກນັ້ນ, ກະຊວງພາຍໃນ (ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ໃນເມື່ອກ່ອນ) ຈຶ່ງໄດ້ມີການຄົ້ນຄວ້າ ແລະ ສະເໜີລັດຖະບານຮັບຮອງເອົາດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 115/ນຍ, ລົງວັນທີ 29 ເມສາ 2009 ແລະ ດຳລັດວ່າດ້ວຍ ມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011. ຜ່ານການປະກາດໃຊ້ ແລະ ຈັດຕັ້ງປະຕິບັດ 02 ດຳລັດດັ່ງກ່າວ ກໍໄດ້ມີແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 200/ຫສພ, ລົງວັນທີ 06 ພຶດສະພາ 2014 ກ່ຽວກັບ ທິດຊີ້ນຳຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ຕໍ່ກັບສະພາບການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGO) ແລະ ອົງການຈັດຕັ້ງສັງຄົມພົນລະເຮືອນ (CSOs) ແລະ ຕາມການຊີ້ນຳຂອງລັດຖະບານ, ກະຊວງພາຍໃນ ໄດ້ຄົ້ນຄວ້າ ແລະ ດຳເນີນການປັບປຸງ ດຳລັດ ວ່າດ້ວຍສະມາຄົມ ແລະ ດຳລັດ ວ່າດ້ວຍມູນນິທິຄືນໃໝ່, ພາຍຫຼັງຮ່າງສຳເລັດຂັ້ນຕົ້ນແລ້ວ ໄດ້ນຳໄປທາບທາມຂໍຄຳຄິດເຫັນຢູ່ໃນກອງປະຊຸມວິຊາການຫຼາຍຄັ້ງ ທັງພາກລັດ ແລະ ອົງການຈັດຕັ້ງສັງຄົມຢ່າງກວ້າງຂວາງ. ພ້ອມທັງໄດ້ນຳສະເໜີເຖິງກະຊວງຍຸຕິທຳ ເພື່ອກວດກາດ້ານເຕັກນິກ ແລ້ວຈຶ່ງນຳສະເໜີຜ່ານກອງປະຊຸມລັດຖະບານ ສະໄໝສາມັນຄັ້ງວັນທີ 28 - 29 ກໍລະກົດ 2014. ພາຍຫຼັງໄດ້ຮັບຄຳຄິດເຫັນ ຈາກກອງປະຊຸມລັດຖະບານ ກະຊວງພາຍໃນ ກໍໄດ້ລາຍງານກົມການເມືອງສູນການພັກ ເພື່ອຂໍການຊີ້ນຳຕື່ມກ່ອນປະກາດໃຊ້ ແລະ ໄດ້ຮັບທິດຊີ້ນຳໃຫ້ມີການປັບປຸງດຳລັດ ວ່າດ້ວຍສະມາຄົມ ແມ່ນໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງຂັ້ນສູນກາງ ເປັນເຈົ້າການອະນຸມັດສ້າງຕັ້ງ ໂດຍມີກະຊວງພາຍໃນ ເຮັດໜ້າທີ່ຄຸ້ມຄອງລວມ ແລະ ຈົດທະບຽນບັນດາສະມາຄົມໃນຂອບເຂດທົ່ວປະເທດ. ສ່ວນດຳລັດວ່າດ້ວຍມູນນິທິ ແມ່ນຍັງຮັກສາ ແລະ ນຳໃຊ້ສະບັບເກົ່າ.

ຈາກທິດຊີ້ນຳຂອງຂັ້ນເທິງຄືດັ່ງກ່າວມານັ້ນ ກະຊວງພາຍໃນ ຈຶ່ງໄດ້ສະເໜີລັດຖະບານຮັບຮອງ ແລະ ປະກາດໃຊ້ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017.

### II. ສະພາບການຈັດຕັ້ງປະຕິບັດ

ໃນໄລຍະຜ່ານມາ ວຽກງານອົງການຈັດຕັ້ງສັງຄົມໄດ້ຮັບຄວາມສົນໃຈຫຼາຍສົມຄວນທັງພາຍໃນ ແລະ ສາກົນ, ອົງການຈັດຕັ້ງລັດ ກໍຄືອົງການຈັດຕັ້ງສັງຄົມໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຫຼາຍຂຶ້ນຕໍ່ວຽກງານອົງການຈັດຕັ້ງສັງຄົມ ໂດຍສະເພາະດຳລັດວ່າດ້ວຍ ມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011 ແລະ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017, ເຊິ່ງຕິດພັນກັບສອງດຳລັດດັ່ງກ່າວ ກະຊວງພາຍໃນ ກໍໄດ້ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ-ປັບປຸງນິຕິກຳຈຳນວນໜຶ່ງ ເພື່ອມາຮັບໃຊ້ໃນວຽກງານດັ່ງກ່າວ ເປັນຕົ້ນແມ່ນການຮັບທຶນ, ຊັບສິນ ແລະ ຊ່ຽວຊານຈາກຕ່າງປະເທດ, ການຈົດທະບຽນ-ຕໍ່ທະບຽນສະມາຄົມ, ການເກັບຄ່າທຳນຽມ-ຄ່າບໍລິການ, ສີນ້ຳມຶກ ແລະ ການນຳໃຊ້ຕາປະທັບ, ການເຄື່ອນໄຫວວຽກງານຢູ່ຂັ້ນທ້ອງຖິ່ນຂອງອົງການຈັດຕັ້ງສັງຄົມ. ພ້ອມທັງໄດ້ສ້າງ ແລະ ປັບປຸງຮ່າງແບບຟອມສຳລັບວຽກງານສະມາຄົມ ແລະ ມູນນິທິ, ຈັດພິມໂພສເຕີ ແລະ ປຶ້ມຄູ່ມືການປະຕິບັດວຽກງານສະມາຄົມ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກປະຊາຊົນ ແລະ ອົງການຈັດຕັ້ງລັດ.

ຄຽງຄູ່ກັບການຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່າວມານັ້ນ ກະຊວງພາຍໃນ ກໍໄດ້ມີການເຜີຍແຜ່ສ້າງຄວາມເຂົ້າໃຈ ແລະ ຝຶກອົບຮົມໃຫ້ແກ່ຜູ້ຮັບຜິດຊອບວຽກງານອົງການຈັດຕັ້ງສັງຄົມຂອງບັນດາກະຊວງ, ອົງການ ທັງສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ. ສິ່ງດັ່ງກ່າວ ໄດ້ເຮັດໃຫ້ວຽກງານຄຸ້ມຄອງອົງການຈັດຕັ້ງສັງຄົມ ມີ

ການປັບປຸງ, ສ້າງຄວາມເປັນເອກະພາບ ແລະ ຫັນເຂົ້າສູ່ລະບຽບການໄປເທື່ອລະກ້າວ, ຊຶ່ງເປັນຜົນມາຈາກການມີນິຕິກຳເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ແກ່ ວຽກງານຄຸ້ມຄອງອົງການຈັດຕັ້ງສັງຄົມໃນດ້ານຕ່າງໆ ທັງພາກລັດ ກໍຄືອົງການຈັດຕັ້ງສັງຄົມ ແລະ ພາກສ່ວນກ່ຽວຂ້ອງອື່ນໆ.

ການປັບປຸງດຳລັດ 115/ນຍ ມາເປັນ 238/ລບ ນັ້ນໄດ້ກຳນົດໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ມີພາລະບົດບາດ, ສິດ ແລະ ໜ້າທີ່ ໃນການວຽກງານອົງການຈັດຕັ້ງສັງຄົມຫຼາຍຂຶ້ນ ໂດຍສະເພາະສິດໃນການອະນຸມັດສ້າງຕັ້ງ ແລະ ໜ້າທີ່ໃນການຕິດຕາມ-ຄຸ້ມຄອງບັນດາອົງການຈັດຕັ້ງສັງຄົມທີ່ນອນຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ, ຊຶ່ງແຕກຕ່າງຈາກ ດຳລັດ 115/ນຍ (ສະບັບເກົ່າ) ໃນເມື່ອກ່ອນທີ່ມີພຽງແຕ່ກະຊວງພາຍໃນ (ອະນຸມັດສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ) ແລະ ເຈົ້າແຂວງ/ເຈົ້າຄອງນະຄອນຫຼວງ (ອະນຸມັດສະມາຄົມທີ່ເຄື່ອນໄຫວຂັ້ນແຂວງ ໄປຮອດຂັ້ນບ້ານ) ໂດຍມີພະແນກພາຍໃນຂັ້ນແຂວງ ເປັນເສນາທິການ. ພາຍໃຕ້ດຳລັດ 238/ລບ ນີ້ໄດ້ກຳນົດໃຫ້ສະມາຄົມ ຕ້ອງໄດ້ຈົດທະບຽນ ແລະ ຕໍ່ທະບຽນປະຈຳປີ ເພື່ອແກ້ໄຂບັນຫາຂອງການບໍ່ສົ່ງບົດລາຍງານປະຈຳປີ ແລະ ຄວາມບໍ່ເອົາໃຈໃສ່ໃນການເຄື່ອນໄຫວ ຢ່າງເປັນປົກກະຕິຂອງບັນດາສະມາຄົມ. ບົນພື້ນຖານລະບຽບກຳນົດໃນການຕໍ່ທະບຽນນີ້ ຍັງໄດ້ເຮັດໃຫ້ການຮ່ວມມືຂອງບັນດາສະມາຄົມ ກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຫັນເຂົ້າສູ່ລະບຽບຫຼາຍຂຶ້ນ ພ້ອມທັງມີໃບທະບຽນເປັນສິ່ງອ້າງອີງເຖິງຕົວຕົນ ແລະ ການເຄື່ອນໄຫວເປັນປົກກະຕິຂອງສະມາຄົມ; ຊ່ວຍແກ້ໄຂບັນຫາທີ່ສະມາຄົມເກົ່າສ້າງຕັ້ງຂຶ້ນກ່ອນດຳລັດ ວ່າດ້ວຍສະມາຄົມ ແລະ ຂາດການເຄື່ອນໄຫວຢ່າງເປັນປົກກະຕິ ໄປຂົນຂວາຍເອົາທຶນ ແລະ ໄປນຳໃຊ້ບໍ່ຖືກຕ້ອງຕາມຈຸດປະສົງ.

ສ່ວນມູນນິທິ ແມ່ນຍັງຮັກສາຮູບແບບເດີມໃນການອະນຸມັດສ້າງຕັ້ງທີ່ມີພຽງຂັ້ນຕອນດຽວ ໂດຍມີກະຊວງພາຍໃນ (ອະນຸມັດມູນນິທິທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ) ແລະ ເຈົ້າແຂວງ/ເຈົ້າຄອງນະຄອນຫຼວງ (ອະນຸມັດມູນນິທິທີ່ເຄື່ອນໄຫວຂັ້ນແຂວງ ໄປຮອດຂັ້ນບ້ານ) ໂດຍມີພະແນກພາຍໃນຂັ້ນແຂວງ ເປັນເສນາທິການ ແລະ ບໍ່ມີໃບທະບຽນ ທີ່ຕ້ອງໄດ້ຕໍ່ອາຍຸທຸກປີ.

ມາຮອດປະຈຸບັນນີ້ ສະຖິຕິສະມາຄົມ ແລະ ມູນນິທິທົ່ວປະເທດທີ່ໄດ້ຮັບການອະນຸມັດສ້າງຕັ້ງ ແລະ ຈົດທະບຽນຕາມດຳລັດ 149/ນຍ ແລະ 238/ລບ ມີ: ທັງໝົດ 249 ອົງກອນ (204 ສະມາຄົມ ແລະ 45 ມູນນິທິ).

## II. ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ

ຜ່ານການຈັດຕັ້ງປະຕິບັດວຽກງານອົງການຈັດຕັ້ງສັງຄົມໃນໄລຍະຜ່ານມາຈົນເຖິງປະຈຸບັນ ສາມາດສັງລວມບັນຫາພົ້ນເດັ່ນ ແລະ ຕີລາຄາດ້ານຕ່າງໆໄດ້ດັ່ງນີ້:

### 1. ດ້ານດີ

#### 2.1. ອົງການຈັດຕັ້ງລັດ

- ມີນິຕິກຳເປັນບ່ອນອີງໃນການຄຸ້ມຄອງ ແລະ ໄດ້ຮັບການຊີ້ນຳຢ່າງໃກ້ຊິດຈາກຄະນະນຳແຕ່ລະຂັ້ນ ເຮັດໃຫ້ວຽກງານຄຸ້ມຄອງອົງການຈັດຕັ້ງສັງຄົມ ເຄື່ອນໄຫວຖືກຕ້ອງຕາມລະບຽບການກຳນົດ;
- ມີການແຕ່ງຕັ້ງ ຜູ້ຮັບຜິດຊອບວຽກງານອົງການຈັດຕັ້ງສັງຄົມຢູ່ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ;
- ມີການຈັດກອງປະຊຸມ ແລະ ຝຶກອົບຮົມຈຳນວນໜຶ່ງ ໃຫ້ແກ່ຜູ້ຮັບຜິດຊອບວຽກງານດັ່ງກ່າວນີ້ ໃນການຈັດຕັ້ງປະຕິບັດດຳລັດ;
- ຫຼາຍພາກສ່ວນມີຄວາມກະຕືລືລົ້ນໃນການຈັດຕັ້ງ ປະຕິບັດດຳລັດ ແລະ ເຜີຍແຜ່ກ່ຽວກັບວຽກງານດັ່ງກ່າວພາຍໃນຂະແໜງການຂອງຕົນ;
- ສາມາດສັງລວມສະພາບການຈັດຕັ້ງ, ການເຄື່ອນໄຫວຊ່ວຍເຫຼືອສັງຄົມ, ການຮ່ວມມືກັບຕ່າງປະເທດ ແລະ ການຊອກຫາແຫຼ່ງທຶນ ຂອງອົງການຈັດຕັ້ງສັງຄົມລາວ;

- ໄດ້ຊຸກຍູ້ໃຫ້ຄຳແນະນຳ ແລະ ອຳນວຍຄວາມສະດວກ, ຕິດຕາມ, ກວດກາການເຄື່ອນໄຫວສະມາຄົມໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດທີ່ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ແລະ ລະບຽບການທີ່ກ່ຽວຂ້ອງ;
- ອົງການຈັດຕັ້ງສັງຄົມໃຫ້ຄວາມຮ່ວມມືໃນການສະໜອງຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຂອງຕົນເປັນຕົ້ນແມ່ນການສະຫຼຸບລາຍງານ ການເຄື່ອນໄຫວວຽກງານຂອງຕົນເປັນປົກກະຕິ.

**2.2. ອົງການຈັດຕັ້ງສັງຄົມ**

- ສະມາຄົມ, ມູນນິທິໄດ້ເອົາໃຈໃສ່ໃນການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ກໍ່ຄືກົດລະບຽບຂອງຕົນຢ່າງມີປະສິດທິຜົນ;
- ສະມາຄົມ ມີແຜນຍຸດທະສາດໃນການຈັດຕັ້ງປະຕິບັດວຽກງານໃນແຕ່ລະໄລຍະ ເຮັດໃຫ້ມີຄວາມສະດວກໃນການການຈັດຕັ້ງປະຕິບັດ ແລະ ບັນລຸເປົ້າໝາຍ;
- ສະມາຄົມ, ມູນນິທິ ໄດ້ມີການປະກອບສ່ວນຍາດແຍ່ງທຶນຮອນຈາກອົງການຈັດຕັ້ງສາກົນຕ່າງໆ ເພື່ອເຂົ້າມາຊ່ວຍເຫຼືອປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ: ການສ້າງອາຊີບ, ການສົ່ງເສີມປູກຝັງ-ລ້ຽງສັດ, ການປົກປັກຮັກສາສິ່ງແວດລ້ອມ, ການສົ່ງເສີມວຽກງານການສຶກສາ, ສາທາ, ແຮງງານ ແລະ ສະຫວັດດີການສັງຄົມ ແລະ ອື່ນໆ ລວມທັງການປະກອບສ່ວນໃນການລຶບລ້າງຄວາມທຸກຍາກຂອງປະເທດ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ.

**2. ດ້ານອ່ອນ**

**2.1. ອົງການຈັດຕັ້ງລັດ**

- ວຽກງານຄຸ້ມຄອງອົງການຈັດຕັ້ງສັງຄົມ ເປັນວຽກໃໝ່ ຈຶ່ງເຮັດໃຫ້ຫຼາຍພາກສ່ວນບໍ່ທັນຮູ້ກ່ຽວກັບຄວາມຈຳເປັນໃນການສ້າງຕັ້ງອົງການຈັດຕັ້ງສັງຄົມ, ຫຼາຍພາກສ່ວນຍັງຖືເບົາ ແລະ ບໍ່ໃຫ້ຄວາມສຳຄັນ;
- ການພິຈາລະນາອະນຸມັດສ້າງຕັ້ງສະມາຄົມມີຫຼາຍຂັ້ນຂອດ ເຮັດໃຫ້ມີຄວາມສັບສົນ ແລະ ໃຊ້ເວລາຫຼາຍ;
- ບັນດາກະຊວງອົງການ, ຍັງບໍ່ທັນເປັນເຈົ້າການໃນການເຜີຍແຜ່ວຽກງານອົງການຈັດຕັ້ງສັງຄົມ ໃຫ້ບັນດາພະແນກການຂອງຕົນຢູ່ແຂວງ ເຮັດໃຫ້ຂອດການດຳເນີນເອກະສານຂອງສະມາຄົມພົບຄວາມຫຍຸ້ງຍາກ ແລະ ໃຊ້ເວລາດົນ;
- ການລົງຊຸກຍູ້ຕິດຕາມ, ກວດກາ, ໂຄສະນາເຜີຍແຜ່ບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງລົງສູ່ຮາກຖານ, ບັນດາເມືອງຕ່າງໆ ແມ່ນຍັງບໍ່ທົ່ວເຖິງ ຈຶ່ງເຮັດໃຫ້ບາງອົງການຈັດຕັ້ງລັດ ລວມທັງປະຊາຊົນຢູ່ຂັ້ນບ້ານຍັງບໍ່ໃຫ້ຄວາມຮ່ວມມືອຳນວຍຄວາມສະດວກຕໍ່ການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມ;
- ບັນດາພະແນກການ, ຂະແໜງການທີ່ຮັບຜິດຊອບວຽກງານຄຸ້ມຄອງອົງການຈັດຕັ້ງສັງຄົມ ຍັງບໍ່ທັນເອົາໃຈໃສ່ຄົ້ນຄວ້າ, ກຳແໜ້ນແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຂອງລັດ ໂດຍສະເພາະແມ່ນ ດຳລັດທີ່ກ່ຽວຂ້ອງກັບວຽກງານອົງການຈັດຕັ້ງສັງຄົມ;
- ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງອົງການຈັດຕັ້ງສັງຄົມ ຍັງບໍ່ທັນຄ່ອງຕົວ, ຈະແຈ້ງ ເຊັ່ນ: ການພົວພັນລະຫວ່າງພາກລັດ ກັບ ພາກລັດເອງ ແລະ ພາກລັດ ກັບ ອົງການຈັດຕັ້ງສັງຄົມ ຍັງພົບຄວາມຫຍຸ້ງຍາກ, ບາງຂະແໜງການ ຍັງບໍ່ທັນເຂົ້າໃຈ ການດຳເນີນເອກະສານໃນການຂໍອະນຸມັດສ້າງຕັ້ງ, ການຕໍ່ທະບຽນສະມາຄົມ, ຂາດການປະສານງານ, ຂາດການຕິດຕາມ, ກວດກາ ແລະ ຂາດການລາຍງານ;
- ຄວາມເຂົ້າໃຈກ່ຽວກັບວຽກງານອົງການຈັດຕັ້ງສັງຄົມຂອງພະນັກງານ-ລັດຖະກອນ ຍັງມີໜ້ອຍ ແລະ ຈຳກັດ (ບໍ່ໄດ້ຮັບການຝຶກອົບຮົມ) ແລະ ມີການສັບປ່ຽນໜ້າທີ່ກັນໃນແຕ່ລະໄລຍະ.

**2.2. ອົງການຈັດຕັ້ງສັງຄົມ**

- ຄະນະບໍລິຫານສະມາຄົມຈຳນວນໜຶ່ງ ຍັງບໍ່ທັນເອົາໃຈໃສ່ຈັດຕັ້ງປະຕິບັດກົດລະບຽບຂອງຕົນ ເຊັ່ນ: ການສົ່ງບົດລາຍງານຊັກຊ້າ, ບໍ່ທ່ວງທັນເວລາ, ການຈັດປະຊຸມປະຈຳປີ, ກອງປະຊຸມໃຫຍ່ ບໍ່ໄປຕາມກຳ

ນິດ, ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະບໍລິຫານ, ຄະນະກວດກາ, ຄະນະ/ຜູ້ອໍານວຍການ ແລະ ສະມາຊິກສະມາຄົມ ແມ່ນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;

- ສະມາຄົມຈໍານວນໜຶ່ງ ຍັງຖືເບົາໃນການປະສານງານກັບພາກລັດໃນເວລາລົງເຄື່ອນໄຫວກິດຈະກໍາຢູ່ທ້ອງຖິ່ນ ແລະ ລະບົບການລາຍງານ ຖ້າພາກລັດບໍ່ອອກແຈ້ງການໄປ ກໍ່ບໍ່ລາຍງານ;
- ບາງສະມາຄົມ ແລະ ມູນນິທິ ສ້າງຕັ້ງຂຶ້ນມາ ບໍ່ໄດ້ຄໍານຶງເຖິງນິຍາມ ຫຼື ຫຼັກການໃນການສ້າງຕັ້ງ ແລະ ມີລັກສະນະສ້າງຕັ້ງຂຶ້ນມາເພື່ອການລະດົມທຶນ ຫຼື ຮັບເອົາທຶນເປັນຕົ້ນຕໍ, ເຊິ່ງມີລັກສະນະບໍ່ຍືນຍົງ;
- ມູນນິທິຈໍານວນໜຶ່ງ ສ້າງຕັ້ງຂຶ້ນແລ້ວບໍ່ມີງົບປະມານລົງເຄື່ອນໄຫວ, ບໍ່ມີອຸປະກອນຮັບໃຊ້;
- ຄວາມອາດສາມາດໃນການຍາດແຍ່ງເອົາທຶນ ໂດຍການຂຽນບົດສະເໜີໂຄງການ ແມ່ນຍັງຂຽນບໍ່ໄດ້ດີ, ຂາດບົດຮຽນປະສົບການ ແລະ ບໍ່ສາມາດຍາດແຍ່ງທຶນມາໄດ້;
- ຄວາມຮູ້, ຄວາມສາມາດຂອງພະນັກງານ ຍັງມີຈໍາກັດ ຍັງບໍ່ທັນກໍາໄດ້ແນວທາງນະໂຍບາຍຂອງພັກ-ລັດຖະບານເທົ່າທີ່ຄວນ ສະແດງອອກໃນການປະກອບຄໍາຄິດເຫັນໃນກອງປະຊຸມຕ່າງໆ;

## 3. ຂໍ້ຄົງຄ້າງ

### 3.1. ອົງການຈັດຕັ້ງລັດ

- ຂະແໜງການທີ່ກ່ຽວຂ້ອງ ທີ່ມີສິດອະນຸມັດສ້າງຕັ້ງສະມາຄົມ ຍັງບໍ່ເຂົ້າໃຈກ່ຽວກັບການຄຸ້ມຄອງ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນ ລວມທັງການສະຫຼຸບລາຍງານ ແລະ ການຈັດກອງປະຊຸມພົບປະລະຫວ່າງຂະແໜງການຂອງຕົນ ແລະ ອົງການຈັດຕັ້ງສັງຄົມທີ່ຢູ່ພາຍໃຕ້ການຄຸ້ມຄອງ ແມ່ນຍັງບໍ່ທັນໄດ້ດໍາເນີນການ;
- ບາງຂະແໜງການຖືວ່າວຽກງານອົງການຈັດຕັ້ງສັງຄົມເປັນວຽກເສີມ ເຊິ່ງບໍ່ໄດ້ໃຫ້ຄວາມສໍາຄັນ ຫຼື ອໍານວຍຄວາມສະດວກໃຫ້ອົງການຈັດຕັ້ງສັງຄົມ, ຍັງມີລັກສະນະກົດໜ່ວງທ່ວງດຶງ ແລະ ຊັກຊ້າ.

### 3.2. ອົງການຈັດຕັ້ງສັງຄົມ

- ຫຼາຍສະມາຄົມສ້າງຕັ້ງຂຶ້ນມາແລ້ວ ບໍ່ມີການໂຄສະນາເຜີຍແຜ່ບົດບາດ, ໜ້າທີ່ ແລະ ຈຸດປະສົງຂອງຕົນຕໍ່ສັງຄົມ ແລະ ສະມາຊິກ, ບໍ່ມີການປະຊຸມສ່ອງແສງລາຍງານພາຍໃນ, ຂາດແບບແຜນວິທີເຮັດວຽກ;
- ບາງສະມາຄົມບໍ່ເຂົ້າໃຈແຈ້ງຕໍ່ຫຼັກການຕື່ນຕົວສະໝັກໃຈ, ບໍ່ຫວັງຜົນກໍາໄລ ແລະ ກຸ້ມຕົນເອງທາງດ້ານການເງິນ;
- ບາງສະມາຄົມສ້າງຕັ້ງຂຶ້ນບໍ່ມີສະມາຊິກ ມີແຕ່ປະທານກັບຮອງປະທານເຮັດວຽກເອງ;
- ສະມາຄົມ, ມູນນິທິຈໍານວນໜຶ່ງ ແມ່ນຜູ້ອໍານວຍການເປັນເຈົ້າການຕັດສິນບັນຫາວຽກວຽກງານຂອງສະມາຄົມ, ສ່ວນປະທານ ແລະ ຮອງປະທານ ບໍ່ມີບົດບາດພົ້ນເດັ່ນເທົ່າທີ່ຄວນ;
- ສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ ເວລາລົງເຄື່ອນໄຫວກິດຈະກໍາຢູ່ທ້ອງຖິ່ນ ບໍ່ໄດ້ມີການລາຍງານ ແລະ ປະສານສົມທົບກັບຂະແໜງພາຍໃນ ສ່ວນຫຼາຍແມ່ນລົງເຮັດວຽກກັບຄູ່ຮ່ວມງານທີ່ເປັນຄູ່ຮ່ວມກິດຈະກໍາຂອງພາກລັດເທົ່ານັ້ນ;
- ສະມາຄົມ, ມູນນິທິຈໍານວນໜຶ່ງ ສ່ວນຫຼາຍສ້າງຕັ້ງຂຶ້ນ ເພື່ອຂໍທຶນຈາກພາຍໃນ ແລະ ຕ່າງປະເທດ ແລະ ເວລາບໍ່ໄດ້ຮັບທຶນກໍ່ບໍ່ມີການເຄື່ອນໄຫວ ແລະ ການເຄື່ອນໄຫວກໍ່ບໍ່ຖືກຕ້ອງກັບຈຸດປະສົງການຂອງການສ້າງຕັ້ງ ຫຼື ກໍານົດໃນກົດລະບຽບ;
- ສະມາຄົມ, ມູນນິທິຈໍານວນໜຶ່ງ ຍັງຖືເບົາຕໍ່ການສະຫຼຸບລາຍງານຫາ ກະຊວງພາຍໃນ ແລະ ພາກສ່ວນທີ່ກ່ຽວຂ້ອງ; ການລາຍງານເປັນພຽງຮູບການ, ການສະຫຼຸບລາຍຮັບ-ລາຍຈ່າຍບໍ່ຕົງກັນ, ບາງມູນນິທິນໍາໃຊ້ເງິນເຂົ້າໃນວຽກງານງານບໍລິຫານຫຼາຍກວ່າກິດຈະກໍາ ເຮັດໃຫ້ມີຊ່ອງວ່າງ ແລະ ມີລັກສະນະບໍ່ໂປ່ງໃສ.

## III. ບັນຫາຄົງຄ້າງ ແລະ ສິ່ງທີ່ຄວນປັບປຸງກ່ຽວກັບການຈັດຕັ້ງປະຕິບັດວຽກງານສະມາຄົມ

1. ນິຍາມ ທີ່ກໍານົດໃນຂໍ້ທີ 2 ມາດຕາ 2 ຄໍາວ່າ "ສະມາຄົມມີຊື່ເອີ້ນຕ່າງກັນ" ຄວນກໍານົດໃສ່ບໍ່ ເຊັ່ນ: ສະຫະສະມາຄົມ, ສະຫະພັນ, ສະໂມສອນ. ໂດຍສະເພາະແມ່ນຊື່ "ສະຫະພັນ ຫຼື ສະໂມສອນ" ທີ່ພາໃຫ້ສັບສົນກັບພາກສ່ວນອື່ນ ໂດຍສະເພາະສະຫະພັນກິລາຕ່າງໆ ແລະ ສະໂມສອນກິລາ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ເຊິ່ງການອະນຸມັດສ້າງຕັ້ງ ແມ່ນມີລະບຽບການສະເພາະແລ້ວ;
2. ສະຫະສະມາຄົມ ຄວນກໍານົດໃນດໍາລັດສະບັບນີ້ບໍ່, ຖ້າກໍານົດ ຄວນມີຂັ້ນຕອນການສ້າງຕັ້ງສະຫະສະມາຄົມ ຫຼື ສະຫະພັນ ແນວໃດ?;
3. ຊື່ຂອງສະມາຄົມ ທີ່ຢາກໃສ່ຄໍາວ່າ "ສ ປປ ລາວ" ຫຼື "ແຫ່ງຊາດລາວ" ຄວນມີຂໍ້ກໍານົດ ຫຼື ຂໍ້ຫ້າມຕື່ມແນວໃດ (ຂໍ້ 4, ມາດຕາ 7)?
4. ສະມາຄົມເສດຖະກິດທີ່ມີລັກສະນະພິເສດ ເປັນຕົ້ນແມ່ນຂົງເຂດເສດຖະກິດທີ່ມີຕ່າງປະເທດມາລົງທຶນເປັນຕົ້ນຕໍ ແລະ ຜູ້ປະກອບການທີ່ເປັນພົນລະເມືອງລາວ ແມ່ນມີໜ້ອຍ. ສະມາຄົມລັກສະນະນີ້ ຄວນມີນະໂຍບາຍໃນການສ້າງຕັ້ງແນວໃດ (ມາດຕາ 9) ແລະ ເງື່ອນໄຂປະເພດສະມາຊິກ ໂດຍສະເພາະສະມາຊິກສາມັນ (ມີສິດລົງຄະແນນ ແລະ ເປັນຄະນະບໍລິຫານ) ຄວນອະນຸຍາດໃຫ້ຄົນຕ່າງປະເທດບໍ່?
5. ສະມາຄົມທີ່ມີລັກສະນະເຊື້ອຊາດ (ຈີນ ຫຼື ຫວຽດນາມ) ຈະກໍານົດ ຫຼື ມີການຄຸ້ມຄອງແຍກສະເພາະບໍ່?
6. ຫ້າມຄະນະຂັບຂວາຍ, ຄະນະບໍລິຫານ, ອໍານວຍການ, ຄະນະກວດກາ ລວມທັງສະມາຊິກ ຂອງສະມາຄົມສັງກັດຢູ່ສະມາຄົມ ຫຼື ມູນນິທິ ໃດໜຶ່ງແລ້ວ ໄປເຄື່ອນໄຫວຢູ່ສະມາຄົມ ຫຼື ມູນນິທິ ອື່ນໆອີກ ຈະມີຄວາມເໝາະສົມບໍ່?;
7. ການອະນຸມັດສ້າງຕັ້ງສະມາຄົມ ລະດັບເມືອງ, ແຂວງ ໃຫ້ກະຊວງພິຈາລະນາສ້າງຕັ້ງ ຄືປັດຈະບັນ ຍັງມີຄວາມເໝາະສົມບໍ່ ຫຼື ຈະມອບໃຫ້ແຂວງພິຈາລະນາອະນຸມັດແລ້ວ ມາຈົດທະບຽນຢູ່ນໍາກະຊວງພາຍໃນ; ຫຼື ກະຊວງພາຍໃນອະນຸມັດ ແລ້ວການຈົດທະບຽນ ການຕໍ່ທະບຽນ ມອບໃຫ້ແຂວງພິຈາລະນາ.
8. ການພິຈາລະນາຮັບຮອງຄະນະຂັບຂວາຍ ແລະ ເປີດກອງປະຊຸມສ້າງຕັ້ງສະມາຄົມ ຄວນແມ່ນລະດັບໃດ (ກົມ ຫຼື ລມຕ) (ມາດຕາ 17 ແລະ 18);
9. ການອະນຸມັດສ້າງຕັ້ງ, ຮັບຮອງກົດລະບຽບ ແລະ ຄະນະບໍລິຫານ ຄວນແມ່ນລະດັບໃດ (ກົມ ຫຼື ລມຕ) (ມາດຕາ 19);
10. ກອງປະຊຸມໃຫຍ່ສະມາຄົມ ຕ້ອງກໍານົດເອກະສານປະກອບຕື່ມແນວໃດ (ຄັດຕິດຂໍ້ຕົກລົງສ້າງຕັ້ງ ແລະ ກົດລະບຽບສະບັບຮັບຮອງ ໂດຍສະເພາະມາດຕາ ທີ່ກໍານົດວາລະກອງປະຊຸມຄັດຕິດມາພ້ອມໃນການຕໍ່ທະບຽນສໍາລັບສະມາຄົມທີ່ສ້າງຕັ້ງເກີນ 02 ປີຂຶ້ນໄປ) ແລະ ວາງມາດຕະການແນວໃດ ເພື່ອໃຫ້ປະຕິບັດຕາມກໍານົດເວລາ?
11. ການຈົດທະບຽນສະມາຄົມ ຄວນກໍານົດຕື່ມໃຫ້ມີ 03 ຂໍ້ຕົກລົງ: 1) ຂໍ້ຕົກລົງອະນຸມັດສ້າງຕັ້ງ, 2) ຂໍ້ຕົກລົງຮັບຮອງກົດລະບຽບ ແລະ 3) ຂໍ້ຕົກລົງຮັບຮອງຄະນະບໍລິຫານ ແລະ ເປີດບັນຊີທະນາຄານຢ່າງຖືກຕ້ອງກ່ອນ (ເພື່ອຕັດບັນຫາວຽກຟອກເງິນ) (ມາດຕາ 20);
12. ພາຍໃນ 07 ວັນ ຖ້າສະມາຄົມ ບໍ່ມາຈົດທະບຽນ. ຈະຖືວ່າການສ້າງຕັ້ງສະມາຄົມເປັນໂມຄະ ແລະ ອົງການໃດຄວນອອກຄໍາສັ່ງໂມຄະ (ມາດຕາ 20);
13. ອາຍຸການນໍາໃຊ້ຂອງໃບທະບຽນ 01 ປີ ຄວນເພີ່ມບໍ່? ແລະ ການຕໍ່ທະບຽນຄວນແບ່ງຂັ້ນຄຸ້ມຄອງໃຫ້ຂັ້ນແຂວງບໍ່. ສໍາລັບການຕໍ່ທະບຽນຊັກຊ້າ ຄວນກໍານົດມາດຕະການປັບໃໝ ຫຼື ລົງໂທດແນວໃດຕື່ມ ຕໍ່ສະມາຄົມທີ່ຕໍ່ທະບຽນບໍ່ທັນກໍານົດເວລາ (ມາດຕາ 20 ແລະ 21)? ສໍາລັບການຕໍ່ໃບທະບຽນ ຄວນຂໍຄໍາເຫັນນໍາຂະແໜງການກ່ຽວຂ້ອງບໍ່? ແລະ ການຕໍ່ທະບຽນສະມາຄົມຂັ້ນແຂວງ ຄວນຕັດຂັ້ນຕອນລົງໃຫ້ສະດວກຂຶ້ນບໍ່ (ການຕໍ່ທະບຽນ ແມ່ນຜ່ານພະແນກກ່ຽວຂ້ອງ, ກະຊວງ, ເຈົ້າແຂວງ ແລ້ວຈຶ່ງມາຫາ ກະຊວງພາຍໃນ)?.

14. ກຳນົດຈະແຈ້ງຕື່ມ ອົງການທີ່ມີສິດອະນຸມັດສ້າງຕັ້ງ ເພາະຜ່ານມາຍັງມີຄວາມສັບສົນວ່າ ອົງການຈັດຕັ້ງມະຫາຊົນ ຫຼື ແນວລາວ ສາມາດອະນຸມັດສ້າງຕັ້ງໄດ້ບໍ່? (ມາດຕາ 22);
15. ສິດ ແລະ ໜ້າທີ່ ຂອງສະມາຄົມໃນການລະດົມທຶນ ຄວນມີລະບຽບ ຫຼື ກົນໄກຄືແນວໃດ? (ມາດຕາ 29);
16. ສິດ, ໜ້າທີ່ ແລະ ພັນທະສະມາຄົມ ຄວນກຳນົດຕື່ມການຮັບທຶນ ຫຼື ການຮັບບໍລິຈາກທຶນ ແລະ ການນຳໃຊ້ຕ້ອງຜ່ານລະບົບບັນຊີທະນາຄານຢ່າງຖືກຕ້ອງບໍ່ ເພື່ອແກ້ບັນຫາວຽກຟອກເງິນ? (ມາດຕາ 28 ແລະ 30);
17. ຄວນກຳນົດຂໍ້ຫ້າມ ບໍ່ໃຫ້ສະມາຄົມ ເຄື່ອນໄຫວນອກເໜືອຈາກຂະແໜງການທີ່ສະເໜີອະນຸມັດສ້າງຕັ້ງ; ຫ້າມດຳລົງຕຳແໜ່ງຊ້ຳຊ້ອນພາຍໃນສະມາຄົມ ແລະ ສະມາຄົມ, ມູນນິທິອື່ນ? ຫ້າມພະນັກງານ-ລັດຖະກອນເປັນຄະນະຂົນຂວາຍ/ຄະນະບໍລິຫານ, ສະມາຊິກສະມາຄົມ ເໝາະສົມບໍ່? (ມາດຕາ 31);
18. ຫ້າມກູ້ຢືມ ຄວນຕັດອອກບໍ່? ເພື່ອເປີດໂອກາດໃຫ້ສະມາຄົມເຄື່ອນໄຫວທຸລະກິດໄດ້ ເພື່ອການຄຶ້ງຕົວ ແລະ ບໍ່ເອື່ອຍອີງແຕ່ທຶນຕ່າງປະເທດ ຫຼື ບໍລິຈາກເປັນຫຼັກ;
19. ໂຄງປະກອບກົງຈັກຂອງສະມາຄົມ ນອກຈາກໜ່ວຍງານວິຊາການແລ້ວ ໃຫ້ສາມາດສ້າງຫ້ອງການສາຂາ (ສະມາຄົມຂັ້ນແຂວງ) ຢູ່ເມືອງ ຫຼື ຫ້ອງການປະຈຳ ຢູ່ແຂວງ (ສະມາຄົມທົ່ວປະເທດ) ໄດ້ບໍ່ (ມາດຕາ 33);
20. ຄະນະບໍລິຫານສະມາຄົມ ຄວນກຳນົດວາລະດຳລົງຕຳແໜ່ງບໍ່? (ມາດຕາ 34);
21. ກອງປະຊຸມໃຫຍ່ສະມາຄົມ ຄວນກຳນົດວິທີການ ແລະ ມາດຖານໃນການຄັດເລືອກຜູ້ສະໝັກເຂົ້າເປັນຄະນະບໍລິຫານ ແນວໃດ ເພື່ອບໍ່ໃຫ້ເກີດບັນຫາຄວາມຂັດແຍ່ງພາຍໃນສະມາຄົມ (ມາດຕາ 43);
22. ການຮັບບໍລິຈາກທຶນທີ່ບໍ່ນອນໃນຮູບແບບໂຄງການ ຫຼື ການປະຕິບັດກິດຈະກຳ, ຊຶ່ງເປັນການບໍລິຈາກຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເພື່ອໃຫ້ສະມາຄົມໄປນຳໃຊ້ຕາມຈຸດປະສົງ-ເປົ້າໝາຍຂອງອົງກອນ ຄວນມີຂໍ້ກຳນົດ ແລະ ການຄຸ້ມຄອງແນວໃດ (ແຜນການ ແລະ ການລາຍງານ) ເພື່ອໃຫ້ມີຄວາມໂປ່ງໃສ ແລະ ຫຼີກເວັ້ນບັນຫາການຟອກເງິນ (ມາດຕາ 55);
23. ຄວນກຳນົດລະບຽບ ແລະ ແຜນການການຮັບທຶນ (ຍົກຕົວຢ່າງ: ກາຍ 500 ລ້ານກີບ ພິຈາລະນາໂດຍກະຊວງການຕ່າງປະເທດ ແລະ ຫຼຸດ 500 ລ້ານກີບ ແມ່ນກະຊວງພາຍໃນພິຈາລະນາ) (ມາດຕາ 55);
24. ຖ້າສະມາຄົມຈ່າຍເງິນບໍລິຫານເກີນ 25% ຈະມີມາດຕະການແນວໃດ (ມາດຕາ 56);?
25. ການຂຶ້ນທະບຽນພາຫະນະ ແລະ ການຄຸ້ມຄອງນຳໃຊ້ພາຫະນະຂອງສະມາຄົມ ລວມທັງລົດກູ້ໄພຕ່າງໆ ຄວນກຳນົດລະບຽບແນວໃດ?;
26. ສະມາຄົມ ຈະດຳເນີນທຸລະກິດ ແມ່ນປະຕິບັດແນວໃດ ແລະ ການກວດກາ-ຕິດຕາມດ້ານລາຍຮັບຈາກທຸລະກິດດັ່ງກ່າວ ຄວນມີຂັ້ນຕອນແນວໃດ (ຕົວຢ່າງ: ບາງສະມາຄົມ ຢາກສ້າງຄລີນິກ ຫຼື ຕັ້ງກຸ່ມທ້ອນເງິນບ້ານ ແລະ ອື່ນໆ)?
27. ຂັ້ນຕອນການຍົກເວັ້ນພາສີ-ອາກອນ ສຳລັບພາຫະນະ ຫຼື ເຄື່ອງຊ່ວຍເຫຼືອຕ່າງໆໃຫ້ແກ່ສະມາຄົມ ຄວນກຳນົດແນວໃດ?
28. ກົນໄກການຄົ້ນຄວ້າ, ພິຈາລະນາ ການຮັບທຶນ ຫຼື ຮັບເອົາຊ່ຽວຊານ, ອາສາສະໝັກຂອງສະມາຄົມ ຄວນປັບປຸງຄືນໃຫ້ແທດເໝາະກັບສະພາບຕົວຈິງ ແລະ ຫຼຸດຂັ້ນຕອນບໍ່ຈຳເປັນລົງແນວໃດ ເພື່ອໃຫ້ການເຄື່ອນໄຫວວຽກງານ ຫຼື ກິດຈະກຳຂອງສະມາຄົມ ມີຄວາມສະດວກ ແລະ ວ່ອງໄວຂຶ້ນ;
29. ການຕັ້ງຕູ້ບໍລິຈາກ ຄວນມີລະບຽບ ແລະ ກົນໄກການຄຸ້ມຄອງແນວໃດ ເພື່ອບໍ່ໃຫ້ເກີດການສວຍໃຊ້ ຫຼື ເພື່ອຜົນປະໂຫຍດສ່ວນຕົວ?
30. ເນື້ອໃນຕາປະທັບຂອງສະມາຄົມ ໂດຍສະເພາະຂອບເບື້ອງລຸ່ມ ກ່ຽວກັບທີ່ຕັ້ງສະມາຄົມ, ເຊິ່ງບໍ່ແຈ້ງສຳລັບສະມາຄົມທົ່ວປະເທດ ແລະ ສະມາຄົມຂັ້ນແຂວງ.

## IV. ບັນຫາຄົງຄ້າງ ແລະ ສິ່ງທີ່ຄວນປັບປຸງກ່ຽວກັບການຈັດຕັ້ງປະຕິບັດວຽກງານມູນນິທິ

1. ການຢັ້ງຢືນຕົວຈິງສຳລັບທຶນເບື້ອງຕົ້ນສຳລັບການສ້າງຕັ້ງມູນນິທິຈາກບຸກຄົນ ຫຼື ນິຕິບຸກຄົນ ຕ້ອງໄດ້ນຳບັນຊີທີ່ມີຈຳນວນເງິນທີ່ໄດ້ມອບໂອນນັ້ນມາຢັ້ງຢືນ ພາຍຫຼັງສ້າງຕັ້ງມູນນິທິສຳເລັດ;
2. ການຮຽກເກັບເງິນຜູ້ປະສົບໄພ ຄວນກຳນົດໃນຂໍ້ຫ້າມບໍ່?

3. ການສ້າງມູນນິທິ ທີ່ມີລັກສະນະຄອບຄົວ ຄວນມີຂໍ້ກຳນົດສະເພາະແນວໃດ (ກອບໃນການລະດົມທຶນ ຫຼື ການບົ່ງບອກໃຫ້ສັງຄົມຮັບຮູ້, ການໃຊ້ຈ່າຍງົບປະມານ ຫຼື ບໍລິຫານພາຍໃນອົງກອນ)?
4. ມູນນິທິຈຳນວນໜຶ່ງບໍ່ສົ່ງບົດລາຍງານ ເຫັນຄວນມີການຈົດທະບຽນ ແລະ ຕໍ່ທະບຽນຄືສະມາຄົມບໍ່?
5. ບັນຫາອື່ນໆທີ່ມີລັກສະນະດຽວກັນກັບສະມາຄົມ ເປັນຕົ້ນແມ່ນການຮັບບໍລິຈາກ, ການໃຊ້ຈ່າຍງົບປະມານ, ສິດ, ໜ້າທີ່ ແລະ ພັນທະ, ຂໍ້ຫ້າມ ແລະ ອື່ນໆຄືດັ່ງທີ່ໄດ້ກ່າວມາຂ້າງເທິງກ່ຽວກັບສະມາຄົມ;
6. ຄວນກຳນົດມາດຕະການ ຫຼື ບົດລົງໂທດຕໍ່ການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມທີ່ລະເມີດຂໍ້ຫ້າມແນວໃດ (ໂຈະການເຄື່ອນໄຫວ, ປັບໃໝ ແລະ ອື່ນໆ);